THURSTON MASON
Behavioral Health Organization

# ສິດຕໍ່ສຸຂະພາບທາງພຶດຕິກໍາ

<u>ສິດທົ່ວໄປ</u>ເຫຼົ່ານີ້ນໍາໃຊ້ໄດ້ກັບ**<u>ບຸກຄົນທຸກຄົນ</u>**, ໂດຍບໍ່ຄໍານຶງວ່າບຸກຄົນນັ້ນຈະເປັນ ຫຼື ບໍ່ເປັນຜູ້ຮັບ Medicaid ແລະ ປະກອບມີສິດດັ່ງນີ້:

- ສິດຕາມລັດຖະທໍາມະນູນ ແລະ ກົດໝາຍທຸກປະການ;
- ໄດ້ຮັບການບໍລິການໂດຍບໍ່ຄໍານຶງເຖິງເຜົ່າພັນ, ຄວາມເຊື່ອຖື, ຊາດກໍາເນີດ, ສາສະໜາ, ເພດ, ຄວາມນິຍົມທາງເພດ, ອາຍຸ ຫຼື ຄວາມພິການ;
- ປະຕິບັດການເລືອກນັບຖືສາສະໜາ ເທົ່າທີ່ການນັບຖືນັ້ນບໍ່ລະເມີດຕໍ່ສິດ ແລະ ການປິ່ນປົວຂອງຜູ້ອື່ນ ຫຼື ການບໍລິການປິ່ນປົວ. ບັນດາຜູ້ເຂົ້າຮ່ວມມີສິດປະຕິເສດຕໍ່ການເຂົ້າຮ່ວມໃນການປະຕິບັດກິດຈະກໍາທາງສາສະໜາ;
- ໄດ້ຮັບການຊ່ວຍເຫຼືອຢ່າງສົມເຫດສົມຜົນ ໃນກໍລະນີທີ່ມີຄວາມພິການທາງຈິດ ຫຼື ຮ່າງກາຍ, ມີຄວາມສື່ສານໄດ້ຈໍາກັດ, ມີຄວາມຮູ້ພາສາອັງກິດໜ້ອຍ, ແລະ ມີຄວາມແຕກຕ່າງທາງດ້ານວັດທະນະທໍາ;
- ໄດ້ຮັບການປິ່ນປົວດ້ວຍຄວາມເຄົາລົບ, ມີກຽດສັກສີ ແລະ ມີຄວາມເປັນສ່ວນຕົວ; ຍົກເວັ້ນໃນກໍລະນີທີ່ພະນັກງານອາດຈະດໍາເນີນການກວດທີ່ສົມເຫດສົມຜົນ ແລະ ປ້ອງກັນການຄອບຄອງ ຫຼື ການນໍາໃຊ້ສິ່ງຂອງຜິດກົດໝາຍຢູ່ໃນຖານທີ່ຕ່າງໆ;
- ປາສະຈາກການກົດຂີ່ຂົ່ມເຫັງ ຫຼື ການລ່ວງລະເມີດທາງເພດ, ລວມທັງທາງດ້ານຮ່າງກາຍ ແລະ ການເງິນ;
- ໄດ້ຮັບການເກັບຮັກສາຂໍ້ມູນການປິ່ນປົວ ແລະ ສ່ວນຕົວຕາມລະບຽບກົດໝາຍການເກັບຮັກສາຄວາມລັບຂອງລັດ ແລະ ລັດຖະບານກາງ;
- ໄດ້ຮັບການທົບທວນຄືນບັນທຶກການປິ່ນປົວດ້ວຍການມີໜ້າຂອງຜູ້ຄຸ້ມຄອງ ຫຼື ຜູ້ໄດ້ຮັບມອບໝາຍ ແລະ ໄດ້ຮັບໂອກາດໃຫ້ຂໍມີການດັດແກ້ ຫຼື ແກ້ໄຂໃຫ້ຖືກຕ້ອງ;
- ໄດ້ຮັບສໍາເນົາຂັ້ນຕອນດໍາເນີນການລະບົບຮ້ອງທຸກຂອງອົງການຕາມການຂໍ ແລະ ຍື່ນຄໍາຮ້ອງທຸກກັບອົງການ, ຫຼື ອົງການສຸຂະພາບທາງພຶດຕິກໍາ (BHO), ຖ້າມີ, ຖ້າທ່ານເຊື່ອວ່າ ສິດຂອງທ່ານຖືກລ່ວງລະເມີດ;
- ສົ່ງຄໍາຮ້ອງຮຽນກັບທາງກົມ ເມື່ອທ່ານຮູ້ສຶກວ່າ ອົງການໄດ້ລະເມີດການກໍານົດເງື່ອນໄຂກໍານົດຂອງ WAC; ແລະ
- ການບໍລິການຊ່ວຍເຫຼືອເພີ່ມເຕີມທີ່ຈໍາເປັນ (NSA) ແມ່ນການບໍລິການທີ່ຈັດໃຫ້ກັບທ່ານ ຖ້າທ່ານມີບັນຫາທາງຈິດ, ປະສາດ, ຮ່າງກາຍ ຫຼື ຄວາມພິການທາງຄວາມຮູ້ສຶກ ຫຼື ອື່ນໆ ທີ່ເຮັດໃຫ້ທ່ານບໍ່ໄດ້ຮັບຜົນປະໂຫຍດຈາກໂຄງການຢູ່ໃນວິທີດຽວກັນທີ່ຜູ້ບໍ່ພິການຈະໄດ້ຮັບຜົນປະໂຫຍດນັ້ນ. ການບໍລິການ NSA ລວມມີບໍ່ຈໍາກັດຄື:
    - ຈັດແຈງ ຫຼື ໃຫ້ຄວາມຊ່ວຍເຫຼືອປະກອບແບບຟອມໃຫ້ຄົບຖ້ວນ ແລະ ສົ່ງໃຫ້ພວກເຮົາ;
    - ຊ່ວຍທ່ານໃຫ້ ຫຼື ຮັບຂໍ້ມູນທີ່ພວກເຮົາຕ້ອງການ ເພື່ອຕັດສິນ ຫຼື ສືບຕໍ່ການມີສິດໄດ້ຮັບ;
    - ຊ່ວຍເຫຼືອທ່ານຂໍສືບຕໍ່ຮັບຜົນປະໂຫຍດ;
    - ຖ້າທ່ານບໍ່ເຮັດໄດ້ຕາມການນັດໝາຍ ຫຼື ກໍານົດເວລາ, ຈະມີການຕິດຕໍ່ຫາທ່ານກ່ຽວກັບເຫດຜົນ ກ່ອນທີ່ພວກເຮົາຈະຫຼຸດ ຫຼື ຢຸດເຊົາຜົນປະໂຫຍດຂອງທ່ານ;
    - ອະທິບາຍໃຫ້ທ່ານເຂົ້າໃຈເຖິງການຫັກ ແລະ ການສິ້ນສຸດຜົນປະໂຫຍດຂອງທ່ານ (ເບິ່ງ WAC 388-418-0020);
    - ຖ້າພວກເຮົາຮູ້ວ່າ ທ່ານມີຄົນໃຫ້ການຊ່ວຍເຫຼືອໃນການປະກອບໃບຄໍາຮ້ອງຂອງທ່ານ, ຈະມີການແຈ້ງໃຫ້ເຂົາເຈົ້າຮູ້ຈັກ ເມື່ອພວກເຮົາຕ້ອງການຂໍ້ມູນ ຫຼື ເມື່ອພວກເຮົາຈະຫຼຸດ ຫຼື ສິ້ນສຸດເງິນຊ່ວຍເຫຼືອຂອງທ່ານ;
    - ຊ່ວຍທ່ານຂໍການພິຈາລະນາສືບສວນທີ່ເປັນທໍາ;
    - ໃຫ້ການຊໍາລະທີ່ມີການປົກປ້ອງ ຖ້າຈໍາເປັນ; ແລະ
    - ທົບທວນຄືນເບິ່ງຄໍາຕັດສິນ ເພື່ອສິ້ນສຸດ, ໂຈະ ຫຼື ຫຼຸດຜົນປະໂຫຍດຂອງທ່ານຕາມການຮ້ອງຂໍ.

สิดสะเพาะเพิ่่านี้นำใช้กับแต่**ผู้รับ Medicaid** เท่านั้น.

ສິດສະເພາະເຫຼົ່ານີ້ນຳໃຊ້ກັບແຕ່**ຜູ້ຮັບ Medicaid** ເທົ່ານັ້ນ. ໃນຖານະເປັນຜູ້ເຂົ້າຮ່ວມໃນ Medicaid, ສິດທຸກຢ່າງ ທັງສິດທົ່ວໄປ ແລະ ສິດສະເພາະແມ່ນຈະນຳໃຊ້ກັບທ່ານ ແລະ ທ່ານມີສິດ:

- ໄດ້ຮັບການປິ່ນປົວດ້ວຍກຽດສັກສີ, ຄວາມເປັນສ່ວນຕົວ ແລະ ຄວາມເຄົາລົບ, ແລະ ໄດ້ຮັບທາງເລືອກການປິ່ນປົວໃນຮູບແບບທີ່ມີຄວາມເໝາະສົມກັບສະພາບຂອງທ່ານ.
- ໄດ້ຮັບຜູ້ແປພາສາທີ່ມີການຢັ້ງຢືນ ແລະ ເອກະສານທີ່ໄດ້ແປໃຫ້ແລ້ວ ໂດຍທີ່ທ່ານບໍ່ຕ້ອງເສຍຄ່າໃດໆ.
- ໄດ້ຮັບຊື່, ທີ່ຢູ່, ເບີໂທລະສັບ, ແລະ ພາສາອື່ນທີ່ສະເໜີໃຫ້ ນອກຈາກທີ່ເປັນພາສາອັງກິດ ຂອງຜູ້ໃຫ້ບໍລິການສຸຂະພາບທາງພຶດຕິກຳຢູ່ໃນ BHO ຂອງທ່ານປະຈຳປີ ຫຼື ເມື່ອທ່ານຂໍເອົາ.
- ໄດ້ຮັບການບໍລິການທີ່ເໝາະສົມຕາມອາຍຸ ແລະ ຕາມວັດທະນະທຳ.
- ໄດ້ຮັບການບໍລິການຢູ່ໃນສະຖານທີ່ໂດຍບໍ່ມີສິ່ງຂວາງໃດໆ (ເຂົ້າເຖິງໄດ້).
- ໄດ້ຮັບການອະທິບາຍທາງເລືອກການປິ່ນປົວຕ່າງໆທີ່ມີຢູ່ໃຫ້.
- ໄດ້ຮັບການບໍລິການທີ່ຈຳເປັນທາງການແພດຕາມກວດ, ການບົ່ງມະຕິ ແລະ ການປິ່ນປົວ (EPSDT) ເປັນແຕ່ລະໄລຍະພາຍໃຕ້ WAC 182-534-0100, ຖ້າທ່ານມີອາຍຸຊາວປີ ຫຼື ອ່ອນກວ່າ.
- ໄດ້ຮັບຂໍ້ມູນ ແລະ ການບໍລິການທີ່ທ່ານຂໍ, ເຊິ່ງຢູ່ພາຍໃຕ້ Medicaid ຕາມພາສາ ແລະ ຮູບແບບທີ່ທ່ານເລືອກ.
- ໄດ້ຮັບການບໍລິການສຸຂະພາບທາງພຶດຕິກຳທີ່ຈຳເປັນທາງການແພດ, ກົງກັບການເຂົ້າຫາມາດຕະຖານການເບິ່ງແຍງດູແລທີ່ທາງກົມຮັບຮອງຢູ່ໃນການຍົກເລີກການເບິ່ງແຍງດູແລທີ່ຕົນເອງຄຸ້ມຄອງກັບລັດຖະບານກາງ. ເຂົ້າຫາມາດຕະຖານການເບິ່ງແຍງດູແລຕ່ຳສຸດທີ່ຈັດໃຫ້ເປັນມາດຕະຖານການເບິ່ງແຍງດູແລ ແລະ ມາດຖານການມີສິດໄດ້ຮັບການບໍລິການສຸຂະພາບທາງພຶດຕິກຳ ແລະ ມີໃຫ້ຢູ່ໃນເວັບໄຊທ໌ຂອງພະແນກສຸຂະພາບພຶດຕິກຳ ແລະ ການຟື້ນຟູ (DBHR) ຂອງອົງການສຸຂະພາບພຶດຕິກຳ (BHA).
- ໄດ້ຮັບບໍລິການຕາມຈຳນວນ ແລະ ໄລຍະເວລາທີ່ທ່ານຕ້ອງການ.
- ເລືອກ ແລະ/ຫຼື ປ່ຽນແປງຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບທາງພຶດຕິກຳໃຫ້ກັບຕົວທ່ານເອງ ແລະ ລູກຂອງທ່ານໄດ້ທຸກເວລາ ດ້ວຍເຫດຜົນໃດກໍ່ໄດ້, ຖ້າລູກຂອງທ່ານມີອາຍຸຕ່ຳກວ່າສິບສາມປີ.
- ສະເໜີຂໍ ແລະ ຮັບເອົາສຳເນົາບັນທຶກການບໍລິການສຸຂະພາບທາງພຶດຕິກຳ ຫຼື ທາງການແພດຂອງທ່ານ, ໄດ້ຮັບແຈ້ງກ່ຽວກັບຄ່າໃຊ້ຈ່າຍໃນການອັດສຳເນົາ.
- ສະເໜີຂໍ ແລະ ຮັບເອົານະໂຍບາຍ ແລະ ຂັ້ນຕອນດຳເນີນການຂອງ BHO ແລະ ອົງການສຸຂະພາບພຶດຕິກຳ ເນື່ອງຈາກເຂົາເຈົ້າກ່ຽວຂ້ອງກັບສິດຂອງທ່ານ.
- ເຂົ້າຮ່ວມໃນການຕັດສິນໃຈປິ່ນປົວ, ລວມທັງສິດປະຕິເສດການປິ່ນປົວ.
- ໄດ້ຮັບຄຳຄິດເຫັນທີສອງຈາກຊ່ຽວຊານເບິ່ງແຍງດູແລສຸຂະພາບທີ່ໄດ້ຮັບການຮັບຮອງຢູ່ພາຍໃນເຄືອຂ່າຍຂອງທ່ານ, ຫຼື ຈັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຄວາມຄິດເຫັນໜຶ່ງຢູ່ນອກເຄືອຂ່າຍ, ໂດຍທີ່ທ່ານບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດ.
- ໄດ້ຮັບຄຳອະທິບາຍກ່ຽວກັບຢາປິ່ນປົວທຸກອັນທີ່ສັ່ງໃຫ້ ແລະ ຜົນຂ້າງຄຽງທີ່ອາດຈະເກີດຂຶ້ນ.
- ໄດ້ຮັບການບໍລິການພາຍຫຼັງສະພາບມີການຄົງຕົວແລ້ວ ຫຼັງຈາກທ່ານໄດ້ຮັບການເບິ່ງແຍງດູແລສຸກເສີນ ຫຼື ເລັ່ງດ່ວນ ຫຼື ການບໍລິການໃນຂັ້ນວິກິດ ທີ່ເຮັດໃຫ້ຕ້ອງໄດ້ຮັບເຂົ້ານອນໂຮງໝໍ.
- ໄດ້ຮັບການເບິ່ງແຍງດູແລສຸກເສີນ ຫຼື ເລັ່ງດ່ວນ ຫຼື ການບໍລິການໃນຂັ້ນວິກິດ.
- ໄດ້ຮັບການບໍລິການສຸຂະພາບທາງພຶດຕິກຳທີ່ຈຳເປັນທາງການແພດທີ່ມີຄຸນນະພາບຢູ່ນອກ BHO ຖ້າບໍ່ສາມາດສະໜອງການບໍລິການເຫຼົ່ານັ້ນໃຫ້ໄດ້ຢ່າງພຽງພໍ ແລະ ທັນກັບເວລາຢູ່ພາຍໃນ BHO.
- ໄດ້ຮັບຂໍ້ມູນກ່ຽວກັບພິໄນກຳທາງການແພດທີ່ບອກເຖິງທາງເລືອກ ແລະ ຄວາມມັກຂອງທ່ານຕໍ່ກັບການເບິ່ງແຍງດູແລສຸຂະພາບຈິດ.
- ໄດ້ຮັບການບໍລິການຂອງຜູ້ກວດກາເອກະສານສຸຂະພາບທາງພຶດຕິກຳ (Ombuds) ເພື່ອຊ່ວຍທ່ານຍື່ນຄຳຮ້ອງທຸກ ຫຼື ຄຳອຸທອນ.
- ຂໍການພິຈາລະນາສືບສວນ (ທີ່ເປັນທຳ) ທາງດ້ານບໍລິຫານ ຖ້າຄຳຮ້ອງທຸກ ຫຼື ຄຳອຸທອນຂອງທ່ານບໍ່ໄດ້ຮັບການແກ້ໄຂໃນການເອື້ອປະໂຫຍດແກ່ທ່ານ.
- ໄດ້ຮັບແຈ້ງການເລື່ອງການປະຕິບັດ ເພື່ອທີ່ທ່ານອາດຈະອຸທອນຄຳຕັດສິນໃດໜຶ່ງຂອງ BHO ທີ່ປະຕິເສດ ຫຼື ຈຳກັດການມີສິດຕໍ່ການບໍລິການທີ່ຂໍ, ທີ່ຫຼຸດ, ງົດ, ຫຼື ສິ້ນສຸດການບໍລິການທີ່ອະນຸຍາດໃຫ້ຜ່ານມາ, ຫຼື ທີ່ປະຕິເສດການຊຳລະການບໍລິການໃນຈຳນວນທັງໝົດ ຫຼື ບາງສ່ວນ ຫຼື ບໍ່ມີການຈັດບໍລິການໃຫ້ທັນເວລາຕາມທີ່ລັດກຳນົດ, ຫຼື ປະຕິບັດຢູ່ພາຍໃນກອບເວລາທີ່ກ່າວໄວ້ຢູ່ໃນ 42 CFR ¤ 438.408(b).
- ບໍ່ຖືກແກ້ແຄ້ນ.
- ບໍ່ຖືກໂດດດ່ຽວ ຫຼື ບໍ່ມີການຫ້າມປາມທຸກຮູບແບບທີ່ໃຊ້ເປັນມາດຕະການບັງຄັບ, ປະຕິບັດວິໄນ, ຄວາມສະດວກ ຫຼື ການແກ້ແຄ້ນ.
- ໄດ້ຮັບຂໍ້ມູນກ່ຽວກັບໂຄງຮ່າງ ແລະ ການດຳເນີນງານຂອງ BHO.
- ໄດ້ຮັບແຈ້ງການລົງທະບຽນເຂົ້າຮ່ວມ, ເອກະສານຂໍ້ມູນ, ເອກະສານອື່ນໆທີ່ກ່ຽວຂ້ອງກັບການຮ້ອງທຸກ, ການອຸທອນ, ແລະ ການພິຈາລະນາສືບສວນທາງດ້ານບໍລິຫານ, ແລະ ເອກະສານແນະນຳກ່ຽວກັບການບໍລິການທີ່ BHO ສະໜອງໃຫ້ ຢູ່ໃນຮູບແບບທີ່ເຂົ້າໃຈງ່າຍ ແລະ ເປັນພາສາທີ່ທ່ານມັກ ທີ່ບໍ່ແມ່ນພາສາອັງກິດ.